# ແຜນກູ້ພັຍໄຟລາມປ່າເກາະມາວອິ

## ສລຸບວຽກ ພາກທີ 1 ສຳເຣັດແລ້ວ

**ເດືອນພືສຈິກາ 30, 2023**

***ເກາະມາວອິໄດ້ຕອບສນອງແກ່ຊາວໂລກຢ່າງຫຼວງຫຼາຍ. ໃນນາມແຂກຢ້ຽມຢາມ, ຖືເປັນກຽດໃຫ້ການອູ້ມຊູເປັນການຕອບແທນ.***

*ກະຊວງຮັບຜິດຊອບການກູ້ພັຍ ສ້ອມແປງຍາມພາວະສຸກເສີນ ໄດ້ມອບໝາຍໃຫ້ ກົມສະຫງວນປ້ອງກັນສິ່ງແວດລ້ອມ ແຫ່ງຊາດ (EPA) ເພື່ອສຳຣວດ, ກວດລ້າງ, ເກັບມ້ຽນ ສານພິດເຄມີອອກໜີຈາກ ເຂດທີ່ໄດ້ຮັບຜົນເສັຽຫາຍທຳລາຍ ຈາກໄຟລາມປ່າ ໃນເກາະມາວອິ (Maui). ຊ່ວງນີ້ເອີ້ນວ່າ ພາກທີ 1.*

ກົມສະຫງວນປ້ອງກັນສິ່ງແວດລ້ອມແຫ່ງຊາດ (EPA) ໄດ້ ປະຕິບັດໜ້າທີ່ສຳເຣັດຜົນແລ້ວສຳລັບ ພາກທີ 1 ຊຶ່ງເປັນບາດ ກ້າວສຳຄັນໃນການກວດລ້າງ, ເກັບມ້ຽນ ສານພິດເຄມີອອກໜີຈາກເຂດເມືອງ ລະຮາຍນາ (Lāhainā) ແລະການບູຣະນະສ້ອມແປງໃນຕົວເມືອງຕລອດທັງເຂດຊຸມຊົນ ຫ່າງອອກໄປຈາກຕົວເມືອງ.

**ພາກທີ 1 - ທີມງານ EPA ທຳການກວດລ້າງເສດສານພິດ** → **ພາກທີ 2 - ທີມງານ Army Corps ກວດລ້າງເສດສິ່ງເພພັງ**

ທີມງານ EPA ແລະບໍຣິສັດຮັບເໝົາ, ຈຳນວນເຄິ່ງນຶ່ງແມ່ນມາຈາກຊຸມຊົນທ້ອງຖິ່ນ,ດ້ວຍການຊ່ວຍເຫຼືອຈາກກອງທັບເຮືອລາດຕາເວນແຄມຝັ່ງທະເລແຫ່ງຊາດ,ພ້ອມດ້ວຍການປະສານງານຮ່ວມກັບ ມາວອິເຄົາທີ ແລະກະຊວງສາທາຣັດຮາວາຍອິ ຈຶ່ງໄດ້ປະສົບຜົນງານຢ່າງຄົບຖ້ວນດັ່ງເຫັນຢູ່ຂ້າງລຸ່ມນີ້:

***1. ສຳຣວດ, ກວດລ້າງ, ເກັບມ້ຽນ ສານພິດເຄມີ ຂົນອອກໜີຈາກໜ້າດິນໃນເຂດເຄຫາສະຖານທີ່ໄດ້ຮັບຜົນເສັຽຫາຍ.***

ທີມງານ EPA ໄດ້ກວດລ້າງເສດສານພິດອອກຈາກເຂດຄຸ້ມບ້ານຄົນຈຳນວນ 1,374 ແຫ່ງ ແລະ ຕຶກຮ້ານຄ້າ 74 ແຫ່ງ. ເຄື່ອງເສດເປັນພິດທີ່ເກັບກວດອອກໄປໃນ ພາກທີ 1 ນັ້ນໄດ້ຖືກເກັບໃສ່ຫໍ່ອັດມ້ຽນ ໂດຍທີມງານປະຈຳສູນກາງຄວບຄຸມປະຈຳເຂດຂອງ EPA. ມີກະຖັງເຫຼັກສິ່ງຄ້າສິນຄ້າທາງເຮືອທັງໝົດ 13 ຖັງ ບັນຈຸເສດສານພິດດັ່ງກ່າວທັງໝົດທີ່ຂົນອອກໄປຈາກເກາະມາວອິ ແລະນຳສົ່ງເກັບໄວ້ທີ່ເຂດປອດໄພ.

ທີມງານ EPA ໄດ້ສົ່ງຈຳນວນເຄື່ອງເສດຈາກເຂດບ້ານຊຸມຊົນ 73 ແຫ່ງ ແລະອີກຈຳນວນນຶ່ງຈາກຫ້າງຮ້ານແລ່ງການຄ້າ 100ແຫ່ງໄດ້ມອບໃຫ້ ກອງທັບວິຊະວະພັສະດຸ (Army Corps of Engineers) ເພື່ອທຳໜ້າທີ່ຊຳລະມ້ຽນເສດສານພິດຍ້ອນສະພາບຂອງສະຖານທີ່ເປັນອຸປສັກກີດກັ້ນແລະບໍ່ປອດໄພ. ສຳລັບຖິ່ນຖານປະເພດນີ້, ເຈົ້າຂອງທີ່ດິນຕ້ອງພົວພັນວຽກປະສານງານກັບ ມາວອິເຄົາທີ ແລະກອງທັບວິຊາວະພັສະດຸ ເພື່ອຈະເຂົ້າເຖິງສະຖານທີ່ເຄຫາສະຖານຂອງທ່ານພາຍ ຫຼັງການກວດລ້າງຍົກຍ້າຍເສດເພພັງທີ່ເປັນພິດສຳເຣັດແລ້ວ.






ເລກໂທ: 808-539-0555 ອີເມວ໌: R9Wildfiresinfo@epa.gov ແວບໄຊ໌: epa.gov/maui-wildfires

### *2. ການຍົກຍ້າຍແລະຊຳລະສະສາງຖ່ານລິທຽມອາຍອອນ (lithium-ion)ແລະຖ່ານທີ່ມີພະລັງແຮງໄຟສູງອອກຈາກຜາບ່ອນຕິດຕັ້ງ,ຈາກລົດຍົນພະເພດໄຟຟ້າແລະລົດສອງລະບົບທັງນໍ້າມັນເຊື້ອເພີງແລະໄຟຟ້າທີ່ໄດ້ຖືກເຜົາໄໝ້ຈາກອັກຄີໄພໄຟລາມປ່າ ເກາະມາວອີ.*

ທີມງານ EPA ໄດ້ຍົກເອົາຖ່ານໄຟຟ້າຂອງລົດໄຟຟ້າແລະລົດສອງລະບົບ 94 ຄັນ, ແລະແຜ່ນຜນັງຄວບຄຸມລະບົບໄຟຟ້າ 274ແຫ່ງ. ກົມ EPA ໄດ້ສ້າງວິທີໃໝ່ຂື້ນມາເພື່ອ ລົດຄວາມແຮງແລະດັບພະລັງຂອງຖ່ານໄຟຟ້າ ທີ່ຈະນຳສົ່ງໃນການຍົກຍ້າຍອອກໄປຈາກເກາະມາວອີຢ່າງປອດໄພ. ມີຖ່ານໄຟຟ້າທີ່ໄດ້ດັບແຮງໄຟແລ້ວ 30 ຕັນ ບັນຈຸເຕັມສອງກະຖັງສິນຄ້າເດີນເຮືອ ທີ່ໄດ້ຍົກຍ້າຍແລະນຳສົ່ງອອກໄປໄວ້ບ່ອນປອດໄພຈາກເກາະມາວອີ ເພື່ອໄປປັບໝູນໄຊ້ແບບໃໝ່.



### *3. ຂັ້ນຕົ້ນ ແລະ ຊ່ວງການໄຊ້ຢາສີດເພີ້ມເພື່ອກັນເຈື່ອນໃສ່ ຂີ້ເຖົ່າ ຕາມພື້ນທີ່ທີ່ຖືກໄຟເຜົາໄໝ້ ໃນສະຖານທີ່ຕ່າງໆ.*

ກົມ EPA ຈະສີດຢາກັນເຈື່ອນ Soiltac® ເພື່ອປົກປ້ອງສຸຂພາບຂອງປວງຊົນ ແລະສິ່ງແວດລ້ອມ ຈາກພິດໄພທີ່ມີຢູ່ໃນຂີ້ເຖົ່າ. ຢາ Soiltac® ຈະນຳໄປສີດຕື່ມອີກໃນເຂດທີ່ມີການແຕະຕ້ອງລົບກວນ. ກອງທັບວິຊາວະພັສດຸ (Army Corps) ຈະກວດລ້າງ ຢາກັນເຈື່ອນ Soiltac® ອອກໄປພ້ອມກັບເສດສິ່ງເຜົາໃໝ້ໃນແຜນການພາກທີ 2.

ຢາກັນເຈື່ອນ Soiltac® ເປັນປະເພດເຊື້ອນໍ້າ ແລະຈັບປົນກັບຂີ້ເຖົ່າແລະເສດສານເຜົາໃໝ້ໄດ້ດີ. ເມື່ອແຫ້ງແລ້ວມັນຈະກາຍເປັນສີໃສງຫໍ່ຫຸ້ມປົກໜ້າດິນແລະວັດຖຸໃໝ້ນັ້ນໄວ້, ສາມາດກັນນໍ້າ ແລະປ້ອງກັນດິນບໍ່ໃຫ້ຖືກເຊາະໃຫຼໜີອອກໄປຈາກສະຖານທີ່.




**ເຖີງແມ່ນວ່າ ທີມງານ EPA ໄດ້ກວດລ້າງເສດສານພິດເກືອບໝົດ ແຕ່ບາງຢ່າງກໍ່ອາດຍັງເຫຼືອຄ້າງຢູ່. ຖ້າວ່າທ່ານເຂົ້າໄປກວດກາເບິ່ງສະຖານທີ່ຄອບຄອງຂອງທ່ານ ໃນຍາມເປີດໃຫ້ເຂົ້າໄດ້, ລົ່ງເຂົ້າໄປດ້ວຍຄວາມລະມັດລະວັງ. ໃຫ້ຖ່າຍຮູບເອົາຣະຫັດ (QR code)ເພື່ອລະເບິ່ງ ຄຳແນະນຳ (video) ອະທິບາຍກ່ຽວກັບໄພອັນຕະຣາຍ ທີ່ທ່ານອາດລະເຂົ້າໄປພົບເຫັນ.**

### *ພາກປະຕິບັດທີ່ສອດຄ່ອງກັບແນວທາງວັທນະທັມ:*

ເພື່ອສະແດງຄວາມສຳຄັນແລະປົກປັກຮັກສາວັທນະທັມແລະພາກປະຕິບັດ, ກົມ EPA ໄດ້ສ້າງແຜນການທາງພາກປະຕິບັດຕໍ່ພະເພນີທ້ອງຖິ່ນ. ແຜນນີ້ໄດ້ເປີດຮັບເອົານັກຊ້ຽວຊານປະກອບທີມງານເປັນຜູ້ເບິ່ງແຍງຄວາມເໝາະສົມໃນທ້ອງ ສນາມວຽກທັງໝົດ 20 ຄົນ; ມີຂໍ້ຜູກມັດທາງການອົບລົມຝຶກພນັກງານຂອງ EPA, ຜູ້ຮັບເໝົາ, ແລະພນັກງານຂອງກອງທັບເຮືອລາດຕະເວນຝັ່ງທະເລ (U.S. Coast Guard); ຮວມທັງຄຳແນະນຳຈາກຜູ້ນຳທ້ອງຖິ່ນ ໃຫ້ແກ່ທີມແລະຄະນະຈັດຕັ້ງຕ່າງໆ ທີ່ພົວພັນວຽກປະສານງານກັບ ກົມ EPA. ແຕ່ລະມື້ກ່ອນເລີ້ມປະຕິງານແລະຫຼັງຈາກໂມງເລີກເຮັດວຽກ ໃນເຂດທີ່ຖືກເຜົາໃໝ້ພະນັກງານໄດ້ໂຮມກັນທຳພິທີ ສັກກາຣະບູຊາ ເຈົ້າທີ່ນຖານຕາມປະເພນີ ຄົນຮາວາຍອີ. ການປະຕິບັດທາງພິທີກັມແບບນີ້ຖືວ່າເປັນພາກສ່ວນສຳຄັນໃນການປະກອບພາຣະກິດການກູ້ໄພ ແລະຍັງຈະດຳເນີນປະຕິບັດສືບຕໍ່ໄປໃນພາກໂຄງການຂັ້ນຕໍ່ໄປຂ້າງໜ້າ.

*ໃນເມື່ອກົມ EPAໄດ້ທຳໜ້າທີ່ກວດລ້າງໃນພາວະສຸກເສີນສຳເຣັດລົງແລ້ວ, ການບໍຣິຫານວຽກຊີດຢາກັນເຈື່ອນ Soiltac® ແລະ ພາຣະກິດອື່ນໆກໍຍັງຄົງສືບຕໍ່ໄປອີກຢູ່ເໝືອນເດີມ. ກົມEPA ຍັງມີຄວາມມຸ້ງໝາຍໃນການຊ້ອນຊູໂຄງການຍາວນານຂອງ ເກາະ ມາວອີ ເພື່ອບູຣະນະສ້ອມແປງ ລະບົບນ້ຳໄຊ້ແລະແຜນຟື້ນຟູຂອງຊຸມຊົນໃຫ້ຍືນຍົງຄົງຢູ່ຕລອດໄປ.*

***ຖ້າວ່າມີຂໍ້ຂ້ອງໃຈ ເລື່ອງການບໍຣິຫານພາກທີ 2, ຕິດຕໍ່ຖາມໄດ້ນຳກອງທັບວິຊາວະພັສດຸ (Army Corps of Engineers):***

ແວບໄຊ້: https://www.poh.usace.army.mil/Missions/Emergency-Response/Hawaii-Wildfires/

ໂທຣະ: 877-214-9117